ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ເລກທີ:...10..../ຈຂ.ຊຂ
ຊຽງຂວາງ, ວັນທີ:.03/.05./2017

# ຄຳສັ່ງ
## ວ່າດ້ວຍ ການຄຸ້ມຄອງ, ສົ່ງເສີມການຜະລິດ, ການປຸງແຕ່ງ ແລະ ການຈຳໜ່າຍຜະລິດຕະພັນ ອາຫານ - ເຄື່ອງດື່ມ.

ເຖິງ: ບັນດາເມືອງ, ພະແນກການ, ກົມກອງ, ຫ້ອງການ, ນາຍບ້ານ, ບໍລິສັດ, ໂຮງງານ, ຫ້າງ - ຮ້ານ,ບ້ານພັກ,ໂຮງແຮມ, ລີສອດ ແລະ ປະຊາຊົນບັນດາເຜົ່າ ທີ່ປະກອບທຸລະກິດ ບໍລິການດ້ານອາຫານ - ເຄື່ອງດື່ມ.

ເລື່ອງ: ການຄຸ້ມຄອງ ແລະ ສົ່ງເສີມໃຫ້ຫົວໜ່ວຍທຸລະກິດ ຜູ້ປະກອບການດ້ານອາຫານ - ເຄື່ອງດື່ມພາຍໃນແຂວງຊຽງຂວາງ ໃຫ້ປະຕິບັດຖືກຕ້ອງຕາມລະບຽບ ແລະ ມາດຕະຖານ.

- ອີງຕາມ ສິດ ແລະ ໜ້າທີ່ຂອງເຈົ້າແຂວງທີ່ໄດ້ກຳນົດຢູ່ກົດໝາຍວ່າດ້ວຍກາປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68 / ສພຊ. ລົງວັນທີ 14 ທັນວາ ປີ 2015.
- ອີງຕາມ ຂໍ້ຕົກລົງຂອງທ່ານ ລັດຖະມົນຕີວ່າການກະຊວງສາທາລະນະສຸກ, ວ່າດ້ວຍການຄຸ້ມຄອງການຜະລິດ, ການສົ່ງອອກ - ນຳເຂົ້າອາຫານທີ່ປອດໄພ ສະບັບເລກທີ 856 / ກຊສ, ວັນທີ12 ພຶດສະພາ 2006.
- ອີງຕາມ ໃບສະເໜີຂອງພະແນກສາທາລະນະສຸກແຂວງ ສະບັບເລກທີ 1212/ ສທຂ, ລົງວັນທີ່ 05 ມີນາ 2017.

## ເຈົ້າແຂວງ ອອກຄຳສັ່ງ:

1. ໃຫ້ບັນດາເມືອງ, ພະແນກການ, ກົມກອງ, ຂະແໜງການ, ຫ້ອງການ ແລະ ອົງການປົກຄອງບ້ານ ພາຍໃນແຂວງຊຽງຂວາງ ທີ່ມີພາລະບົດບາດ, ສິດ ແລະ ໜ້າທີ່ໃນການຊີ້ນຳ, ຄຸ້ມຄອງ, ກວດກາຫົວໜ່ວຍທຸລະກິດ, ຜູ້ປະກອບການ, ບໍລິການເພື່ອຈຳໜ່າຍ ດ້ານອາຫານ - ເຄື່ອງດື່ມ ລວມທັງການນຳເຂົ້າ - ສົ່ງອອກ ກ່ອນຈະອະນຸຍາດໃຫ້ພາກລັດ, ເອກະຊົນ, ບຸກຄົນ ຫຼື ລວມໝູ່ດຳເນີນທຸລະກິດດັ່ງກ່າວ ຕ້ອງໄດ້ປະຕິບັດຕາມກົດໝາຍຂໍ້ກຳນົດ, ຂໍ້ຕົກລົງ, ມາດຕະການ ແລະ ລະບຽບການອື່ນໆ ທີ່ມີຜົນເຮັດໃຫ້ອາຫານ - ເຄື່ອງດື່ມປອດໄພ ພ້ອມກັນນັ້ນ; ຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນຄຸນນະພາບຈາກຂະແໜງສາທາລະນະສຸກກ່ອນ ຈຶ່ງອະນຸຍາດໃຫ້ດຳເນີນທຸລະກິດໄດ້.
2. ພາຍຫຼັງໄດ້ຮັບແຈ້ງການສະບັບນີ້, ບັນດາໂຮງງານ, ຜູ້ຜະລິດປຸງແຕ່ງ, ຈຳໜ່າຍ, ນຳເຂົ້າ - ສົ່ງອອກ ຜະລິດຕະພັນອາຫານ ແລະ ເຄື່ອງດື່ມຕ້ອງພ້ອມກັນຈັດຕັ້ງປະຕິບັດຕາມລະບຽບຫຼັກການ ແລະ ມາດຕະການຂອງສາ ທາລະນະສຸກທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ ຖ້າຫາກບໍ່ໄດ້ຜ່ານການກວດກາ ຫຼື ຢັ້ງຢືນຄຸນນະພາບ ຈາກຂະແໜງສາທາລະນະສຸກ ແມ່ນຫ້າມບໍ່ໃຫ້ດຳເນີນທຸລະກິດຮັບໃຊ້ສັງຄົມຢ່າງເດັດຂາດ.

3. ມອບໃຫ້ ພະແນກສາທາລະນະສຸກແຂວງ ແລະ ບັນດາຫ້ອງການສາທາລະນະສຸກເມືອງເປັນເຈົ້າການໃນການຜັນຂະຫຍາຍ ແລະ ປະສານສົມທົບກັບບັນດາພະແນກການ, ຂະແໜງການ ແລະ ອົງການຈັດຕັ້ງຕ່າງໆ ທີ່ກ່ຽວຂ້ອງພາຍໃນແຂວງຂອງຕົນກ່ຽວກັບຄຳສັ່ງສະບັບນີ້.

4. ຄຳສັ່ງສະບັບນີ້ມີຜົນສັກສິດ ແລະ ສາມາດນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ເຈົ້າແຂວງ

ບົວສອນ ສີນວນທອງ